ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 096 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30 ສິງຫາ 2023

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍສານທະຫານ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 90/ສພຊ, ລົງວັນທີ 17 ກໍລະກົດ 2023 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສານທະຫານ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 24/ຄປຈ, ລົງວັນທີ 15 ສິງຫາ 2023.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍສານທະຫານ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 90 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 / 07 / 23

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສານທະຫານ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສານທະຫານ (ສະບັບປັບປຸງ) ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 12 ກໍລະກົດ 2023 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 17 ກໍລະກົດ 2023.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສານທະຫານ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 40 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 ກໍລະກົດ 2023

# ກົດໝາຍ
# ວ່າດ້ວຍສານທະຫານ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ການຕິດຕາມ ກວດກາ ວຽກງານສານທະຫານ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງສານທະຫານ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ເຮັດໃຫ້ການພິຈາລະນາຕັດສິນ, ພິພາກສາຄະດີອາຍາ ມີຄວາມວ່ອງໄວ, ໂປ່ງໃສ, ພາວະວິໄສ, ຖືກຕ້ອງ ແລະ ຍຸຕິທຳ ແນໃສ່ປົກປ້ອງຜົນປະໂຫຍດຂອງກອງທັບ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງ ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນ ແລະ ກຳລັງສຳຮອງ ໃນເວລາປະຕິບັດໜ້າທີ່ປ້ອງກັນຊາດ, ເຮັດໃຫ້ກອງທັບ ມີ ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານກົດໝາຍ ແລະ ມີແບບແຜນທັນສະໄໝ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 (ປັບປຸງ) ສານທະຫານ**

ສານທະຫານ ແມ່ນ ອົງການຕຸລາການ ທີ່ເຮັດໜ້າທີ່ພິຈາລະນາຕັດສິນ, ພິພາກສາ ຄະດີອາຍາ ໃນກອງທັບປະຊາຊົນລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງກົດໝາຍສະບັບນີ້.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄຳຕົກລົງຂອງສານ** ໝາຍເຖິງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ;
2. **ຄຳສັ່ງຂອງສານ** ໝາຍເຖິງ ໜຶ່ງໃນປະເພດຄຳຕົກລົງຂອງສານ ກ່ຽວກັບການດຳເນີນຄະດີ ເຊັ່ນ ຄຳສັ່ງ ຍຶດຊັບ ຫຼື ອາຍັດຊັບ, ຄຳສັ່ງຈັບຕົວ ແລະ ຄຳສັ່ງອື່ນ;

3. **ຄຳຊີ້ຂາດຂອງສານ** ໝາຍເຖິງ ໜຶ່ງໃນປະເພດຄຳຕົກລົງຂອງສານ ກ່ຽວກັບການຊີ້ຂາດສິດອຳນາດຂອງສານ, ຂອງຄະນະສານ, ການບໍ່ຮັບເອົາຄະດີມາພິຈາລະນາ, ຄຳຕັດສິນປະຫານຊີວິດ ແລະ ຄຳຊີ້ຂາດອື່ນ;

4. **ຄຳຕັດສິນຂອງສານ** ໝາຍເຖິງ ໜຶ່ງໃນປະເພດຄຳຕົກລົງຂອງສານ ທີ່ຕັດສິນເປັນຂັ້ນຕົ້ນ;

5. **ຄຳພິພາກສາຂອງສານ** ໝາຍເຖິງ ໜຶ່ງໃນປະເພດຄຳຕົກລົງຂອງສານ ທີ່ຕັດສິນເປັນຂັ້ນອຸທອນ ຫຼື ຂັ້ນລົບລ້າງ;

6. **ຄູ່ຄວາມ** ໝາຍເຖິງ ໂຈດ ແລະ ຈຳເລີຍ ໃນຄະດີ;

7. **ຜູ້ປົກປ້ອງ** ໝາຍເຖິງ ທະນາຍຄວາມ, ຜູ້ຕາງໜ້າອົງການຈັດຕັ້ງ, ຜົວ ຫຼື ເມຍ, ພໍ່, ແມ່, ຜູ້ປົກຄອງ ຫຼື ຍາດໃກ້ຊິດ ທີ່ເຂົ້າຮ່ວມໃນການດຳເນີນຄະດີ ຕາມການມອບໝາຍ ຫຼື ຕາມກົດໝາຍ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ຜູ້ຖືກຫາ ຫຼື ຈຳເລີຍ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ ຫຼື ຜູ້ຮັບຜິດຊອບທາງແພ່ງ;

8. **ທະນາຍຄວາມ** ໝາຍເຖິງ ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງ ໃຫ້ເຂົ້າຮ່ວມໃນການດຳເນີນຄະດີ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ ຕາມກົດໝາຍ;

9. **ຜູ້ຖືກຫາ** ໝາຍເຖິງ ບຸກຄົນທີ່ຖືກນຳມາດຳເນີນຄະດີ ພາຍຫຼັງມີຄຳສັ່ງເປີດການສືບສວນ-ສອບສວນ;

10. **ຈຳເລີຍ** ໝາຍເຖິງ ຜູ້ຖືກສັ່ງຟ້ອງຂຶ້ນສານ;

11. **ຜູ້ກະທຳຜິດ** ໝາຍເຖິງ ຜູ້ຖືກສານຕັດສິນລົງໂທດ;

12. **ພະນັກງານສານທະຫານ** ໝາຍເຖິງ ປະທານ, ຮອງປະທານ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ, ພະນັກງານວິຊາການ ແລະ ພະນັກງານບໍລິຫານ ຂອງສານທະຫານ;

13. **ພຶດຕິກຳ** ໝາຍເຖິງ ການກະທຳ ຫຼື ການເມີນເສີຍ;

14. **ໝາຍຮຽກຂອງສານ** ໝາຍເຖິງ ໜັງສືທີ່ອອກໂດຍສານ ເພື່ອຮຽກຕົວໂຈດ, ຈຳເລີຍ, ບຸກຄົນທີສາມ, ພະຍານ ແລະ ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີ ເຂົ້າມາສານ ຕາມວັນເວລາ ແລະ ສະຖານທີ່ ຊຶ່ງກຳນົດໄວ້ໃນໝາຍຮຽກ;

15. **ຍຸຕິທຳ** ໝາຍເຖິງ ຄວາມຖືກຕ້ອງເປັນທຳ ຕາມກົດໝາຍ;

16. **ນິຕິທຳ** ໝາຍເຖິງ ການເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງຖືກຕ້ອງ ແລະ ເຂັ້ມງວດ;

17. **ປະເພນີສານ** ໝາຍເຖິງ ຄຳພິພາກສາຂອງສານປະຊາຊົນສູງສຸດ ກ່ຽວກັບບັນຫາໃດໜຶ່ງ ໃນຄະດີອາຍາ ຊຶ່ງກົດໝາຍກຳນົດໄວ້ບໍ່ຊັດເຈນ;

18. **ຈ່າສານ** ໝາຍເຖິງ ພະນັກງານຂອງສານທະຫານ ທີ່ມີ ເງື່ອນໄຂ, ມາດຕະຖານ ແລະ ໄດ້ຮັບການແຕ່ງຕັ້ງຈາກປະທານສານປະຊາຊົນສູງສຸດ;

19. **ບຸກຄົນນອກກອງທັບ** ໝາຍເຖິງ ພົນລະເມືອງລາວ ທີ່ບໍ່ສັງກັດໃນການຈັດຕັ້ງຂອງກອງທັບ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ;

20. **ນາຍ ແລະ ພົນທະຫານ** ໝາຍເຖິງ ນາຍ ແລະ ພົນທະຫານ ທີ່ປະຈຳການ ແລະ ພັກຜ່ອນຮັບບຳນານ;

21. **ກຳມະກອນປ້ອງກັນຊາດ** ໝາຍເຖິງ ນາຍ ແລະ ພົນທະຫານ, ບຸກຄົນ ທີ່ເຮັດວຽກຢູ່ໂຮງຈັກ, ໂຮງງານ ແລະ ຫົວໜ່ວຍທຸລະກິດຂອງກອງທັບ;

22. **ພາລະກອນປ້ອງກັນຊາດ** ໝາຍເຖິງ ບຸກຄົນທີ່ຖືກລະດົມເຂົ້າມາຮັບໃຊ້ໃນກອງທັບ ໃນເວລາທີ່ເຫັນວ່າມີຄວາມຈຳເປັນ;

23. **ກຳລັງສຳຮອງປ້ອງກັນຊາດ** ໝາຍເຖິງ ກຳລັງບໍ່ປະຈຳການໃນກອງທັບປະຊາຊົນລາວ ໃນຍາມສັນຕິພາບ ຊຶ່ງນອນໃນແຜນການຈັດຕັ້ງປະກອບຂອງກອງທັບປະຊາຊົນລາວ ໃນພາວະສຸກເສີນ ແລະ ປະຕິບັດໜ້າທີ່ເປັນກອງໜູນໃຫ້ແກ່ກຳລັງປະຈຳການໃນກອງທັບ ເມື່ອມີຄວາມຕ້ອງການ;

24. **ກອງຫຼອນ** ໝາຍເຖິງ ກຳລັງປ້ອງກັນຊາດຂັ້ນບ້ານ ຊຶ່ງປະຕິບັດໜ້າທີ່ປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງບ້ານ ຫຼື ປະສານສົມທົບກັບກຳລັງອື່ນ ເພື່ອປ້ອງກັນຂອບເຂດໃດໜຶ່ງ ຕາມການມອບໝາຍຂອງຂັ້ນເທິງ;

25. **ກຳລັງປ້ອງກັນຕົວ** ໝາຍເຖິງ ພະນັກງານ, ກຳມະກອນ, ນັກສຶກສາປະກອບອາວຸດ ທີ່ໄດ້ຈັດຕັ້ງຂຶ້ນຢູ່ ສຳນັກງານ, ອົງການ, ສະຖານການສຶກສາ, ໂຮງໝໍ, ໂຮງຈັກ, ໂຮງງານ ແລະ ສາງຄັງ ທີ່ເປັນຂອງລັດ ຊຶ່ງມີໜ້າທີ່ປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ພາຍໃນຂອບເຂດທີ່ຕັ້ງຂອງຕົນ;

26. **ຄະນະສານທະຫານເຄື່ອນທີ່** ໝາຍເຖິງ ຄະນະສານທີ່ໄປຕັດສິນ ຫຼື ພິພາກສາຄະດີອາຍາ ຢູ່ບ່ອນຄະດີເກີດຂຶ້ນ ຫຼື ບ່ອນຈຳເລີຍຖືກກັກຂັງ;

27. **ກຳລັງປະກອບອາວຸດປ້ອງກັນຊາດ** ໝາຍເຖິງ ການຈັດຕັ້ງທີ່ດຳເນີນການຕໍ່ສູ້ດ້ວຍອາວຸດຕໍ່ສັດຕູ ໂດຍແມ່ນລັດເປັນຜູ້ ຊີ້ນຳ, ນຳພາ-ບັນຊາ ແລະ ຄຸ້ມຄອງໂດຍກົງ, ກຳລັງຫຼວງ, ກຳລັງທ້ອງຖິ່ນ, ກອງຫຼອນ ແລະ ກອງປ້ອງກັນຕົວ;

28. **ລາດຕະເວນ** ໝາຍເຖິງ ການເຄື່ອນໄຫວປະຕິບັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃນຂອບເຂດໃດໜຶ່ງ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານສານທະຫານ**

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກ ໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ຂອງສານທະຫານ ດ້ວຍການ ວາງນະໂຍບາຍ, ກົດໝາຍ ແລະ ລະບຽບການ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ອຸປະກອນຮັບໃຊ້ທີ່ຈຳເປັນ ແລະ ສ້າງໂຄງລ່າງພື້ນຖານ ໃຫ້ເໝາະສົມ ເພື່ອໃຫ້ການພິຈາລະນາຕັດສິນ ຫຼື ພິພາກສາຄະດີ ມີຄວາມວ່ອງໄວ, ໂປ່ງໃສ, ຖືກຕ້ອງ ແລະ ຮັບປະກັນຄວາມຍຸຕິທຳໃນສັງຄົມ.

ລັດ ເອົາໃຈໃສ່ ຊຸກຍູ້, ຍົກລະດັບວິຊາສະເພາະ, ໂຄສະນາ, ສຶກສາອົບຮົມກົດໝາຍ ໃຫ້ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ຮັບຮູ້, ເຂົ້າໃຈ, ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ ແລະ ເຂົ້າເຖິງຂະບວນການຍຸຕິທຳ ພ້ອມທັງສ້າງເງື່ອນໄຂ ໃຫ້ມີຄະນະສານທະຫານເຄື່ອນທີ່.

**ມາດຕາ 5 (ປັບປຸງ) ຄະດີທີ່ນຳມາພິຈາລະນາຢູ່ສານທະຫານ**

ຄະດີທີ່ນຳມາພິຈາລະນາຢູ່ສານທະຫານ ມີ ດັ່ງນີ້:

1. ຄະດີອາຍາ ທີ່ນາຍ ແລະ ພົນທະຫານ, ກຳມະກອນປ້ອງກັນຊາດ ຖືກກ່າວຫາວ່າເປັນຜູ້ກະທຳຜິດ;

2. ຄະດີອາຍາ ທີ່ກຳລັງປ້ອງກັນຕົວ, ກອງຫຼອນ, ກຳລັງສຳຮອງ, ພາລະກອນປ້ອງກັນຊາດ ຊຶ່ງເຮັດໜ້າທີ່ໃນໄລຍະອົບຮົມ, ຫັດແອບ, ກຽມພ້ອມສູ້ຣົບ, ເຄື່ອນໄຫວສູ້ຣົບ ຫຼື ລາດຕະເວນ ທີ່ກອງທັບຄຸ້ມຄອງໂດຍກົງ ຖືກກ່າວຫາວ່າເປັນຜູ້ກະທຳຜິດ;

3. ຄະດີອາຍາ ຂອງບຸກຄົນນອກກອງທັບ ທີ່ກໍ່ຄວາມເສຍຫາຍ ຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມລັບທາງການທະຫານ ແລະ ຕໍ່ຜົນປະໂຫຍດຂອງກອງທັບ, ຊີວິດ, ສຸຂະພາບ, ກຽດສັກສີ, ຊັບສິນ ຂອງນາຍ ແລະ ພົນທະຫານ;

4. ການກະທຳຜິດທາງທະຫານ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ.

**ມາດຕາ 6 (ປັບປຸງ) ຂັ້ນພິຈາລະນາຕັດສິນຄະດີອາຍາຂອງສານທະຫານ**

ສານທະຫານ ຕັດສິນຄະດີເປັນ ສາມຂັ້ນ ຄື:

1. ຂັ້ນຕົ້ນ;
2. ຂັ້ນອຸທອນ;
3. ຂັ້ນລົບລ້າງ.

ສານທະຫານແຂວງ, ນະຄອນຫຼວງ ພິຈາລະນາຕັດສິນເປັນຂັ້ນຕົ້ນ ຕາມຂໍ້ມູນຫຼັກຖານ ແລະ ກົດໝາຍ.

ສານທະຫານພາກ ພິຈາລະນາຕັດສິນຕາມ ຂໍ້ມູນຫຼັກຖານ ແລະ ກົດໝາຍ ເປັນຂັ້ນຕົ້ນ ຄະດີທີ່ບໍ່ຢູ່ໃນສິດອຳນາດຂອງສານທະຫານ ແຂວງ, ນະຄອນຫຼວງ; ພິຈາລະນາພິພາກສາເປັນຂັ້ນອຸທອນ ຄະດີທີ່ສານທະຫານແຂວງ, ນະຄອນຫຼວງ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍອົງການໄອຍະການທະຫານ;

ສານທະຫານຂັ້ນສູງ ພິຈາລະນາພິພາກສາເປັນຂັ້ນອຸທອນ ຕາມຂໍ້ມູນຫຼັກຖານ ແລະ ຕາມກົດໝາຍ ຄະດີທີ່ສານທະຫານພາກ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍອົງການໄອຍະການທະຫານ; ພິຈາລະນາພິພາກສາເປັນຂັ້ນລົບລ້າງທາງດ້ານກົດໝາຍ ຄະດີທີ່ສານທະຫານພາກ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍອົງການໄອຍະການທະຫານ.

**ມາດຕາ 7 (ປັບປຸງ) ການປົກປ້ອງ**

ພະນັກງານສານທະຫານ ລວມທັງຜູ້ເຂົ້າຮ່ວມໃນການດຳເນີນຄະດີ ໄດ້ຮັບການປົກປ້ອງຕາມກົດໝາຍຈາກການບັງຄັບ, ນາບຂູ່ ແລະ ພຶດຕິກຳອື່ນທີ່ເປັນອັນຕະລາຍຕໍ່ຊີວິດ, ສຸຂະພາບ, ກຽດສັກສີ, ຊັບສິນສ່ວນຕົວ ຫຼື ຄອບຄົວ.

**ມາດຕາ 8 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ສານທະຫານ ແລະ ການພິຈາລະນາຕັດສິນຄະດີອາຍາຂອງສານທະຫານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງກົດໝາຍສະບັບນີ້.

**ມາດຕາ 9 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສານທະຫານ ເປັນຕົ້ນ ການຮ່ວມມືທາງດ້ານກົດໝາຍ ແລະ ຍຸຕິທຳ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ ຫຼື ສຳມະນາ, ຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ ເພື່ອພັດທະນາວຽກງານສານທະຫານ ໃຫ້ມີຄຸນນະພາບ, ເຂັ້ມແຂງ ແລະ ທັນສະໄໝ ລວມທັງປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

# ພາກທີ II
# ຫຼັກການພື້ນຖານໃນການດຳເນີນຄະດີຢູ່ສານທະຫານ

**ມາດຕາ 10 ຫຼັກການພື້ນຖານໃນການດຳເນີນຄະດີຢູ່ສານທະຫານ**

ການດຳເນີນຄະດີອາຍາຢູ່ສານທະຫານ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດກົດໝາຍ ໃນການພິຈາລະນາຄະດີ;
2. ຮັບປະກັນຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ສານທະຫານ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;
3. ຮັບປະກັນສິດ ໃນການຕໍ່ສູ້ຄະດີ;
4. ຮັບປະກັນຄວາມເປັນເອກະລາດຂອງສານ;
5. ຮັບປະກັນການພິຈາລະນາຄະດີເປັນໝູ່ຄະນະ;
6. ພາສາທີ່ໃຊ້ໃນການດຳເນີນຄະດີ;
7. ຮັບປະກັນການພິຈາລະນາຄະດີຢູ່ທີ່ປະຊຸມສານ ຢ່າງເປີດເຜີຍ;
8. ເຄົາລົບ ແລະ ປະຕິບັດຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ.

**ມາດຕາ 11 (ປັບປຸງ) ການເຄົາລົບ ແລະ ປະຕິບັດກົດໝາຍ ໃນການພິຈາລະນາຄະດີ**

ໃນການພິຈາລະນາຕັດສິນຄະດີ ສານ ຕ້ອງອີງໃສ່ຫຼັກຖານ ແລະ ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ. ໃນກໍລະນີທີ່ມີບັນຫາໃດໜຶ່ງ ຊຶ່ງກົດໝາຍກຳນົດໄວ້ບໍ່ຊັດເຈນ ສານ ຕ້ອງພິຈາລະນາຕາມປະເພນີສານ. ສຳລັບພຶດຕິກຳໃດໜຶ່ງ ທີ່ບໍ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ບໍ່ໄດ້ກຳນົດເປັນການກະທຳຜິດທາງອາຍາ ສານ ຈະນຳມາຕັດສິນລົງໂທດທາງອາຍາ ບໍ່ໄດ້.

ຄຳພິພາກສາຂັ້ນລົບລ້າງຂອງສານທະຫານຂັ້ນສູງ ກ່ຽວກັບບັນຫາໃດໜຶ່ງໃນຄະດີອາຍາ ຊຶ່ງກົດໝາຍກຳນົດໄວ້ບໍ່ຊັດເຈນ ຈະເປັນປະເພນີສານໄດ້ ກໍຕໍ່ເມື່ອມີຄຳແນະນຳຂອງສານປະຊາຊົນສູງສຸດ.

ສຳລັບຄຳພິພາກສາຂອງສານປະຊາຊົນສູງສຸດ ກ່ຽວກັບບັນຫາດັ່ງກ່າວ ໃຫ້ຖືເປັນປະເພນີສານ.

**ມາດຕາ 12 (ປັບປຸງ) ການຮັບປະກັນຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ສານທະຫານ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ**

ຜູ້ເຂົ້າຮ່ວມໃນການດຳເນີນຄະດີຢູ່ສານທະຫານ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ສານທະຫານ ໂດຍບໍ່ຈຳແນກ ເພດ, ເຊື້ອຊາດ, ສັນຊາດ, ຊົນເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຊີບ, ຊັ້ນ, ຕຳແໜ່ງ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ.

ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນ, ກຳລັງສຳຮອງ ປ້ອງກັນຊາດ, ກຳລັງປ້ອງກັນຕົວ, ກອງຫຼອນ ແລະ ບຸກຄົນນອກກອງທັບ ມີສິດຮ້ອງຟ້ອງຕໍ່ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ ຫຼື ອົງການໄອຍະການທະຫານ ເມື່ອເຫັນວ່າມີການລະເມີດທີ່ເປັນການກະທຳຜິດທາງອາຍາ.

**ມາດຕາ 13 (ປັບປຸງ) ການຮັບປະກັນສິດໃນການຕໍ່ສູ້ຄະດີ**

ຈຳເລີຍ ມີສິດຕໍ່ສູ້ຄະດີຢູ່ສານທະຫານດ້ວຍ ຕົນເອງ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

ການເຂົ້າຮ່ວມຂອງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນໃນການດຳເນີນຄະດີ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຍຄວາມ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 14 ການຮັບປະກັນຄວາມເປັນເອກະລາດຂອງສານ**

ໃນການໄຕ່ສວນ ແລະ ພິຈາລະນາຕັດສິນຄະດີນັ້ນ ສານທະຫານ ມີຄວາມເປັນເອກະລາດ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ.

**ມາດຕາ 15 (ປັບປຸງ) ການຮັບປະກັນການພິຈາລະນາຄະດີເປັນໝູ່ຄະນະ**

ຄະນະສານຕັດສິນຄະດີ ຂອງສານທະຫານຂັ້ນສູງ, ສານທະຫານພາກ, ສານທະຫານແຂວງ, ນະຄອນຫຼວງ ປະກອບດ້ວຍ ຜູ້ພິພາກສາ ສາມຄົນ ໃນນັ້ນຜູ້ໜຶ່ງເປັນປະທານ ແລະ ອີກສອງຄົນ ເປັນຄະນະ.

ຄຳຕັດສິນຂອງຄະນະສານ ຕ້ອງຖືເອົາຕາມສຽງສ່ວນຫຼາຍ.

ການພິຈາລະນາຕັດສິນຄະດີ ຕ້ອງຮັບປະກັນຄວາມລັບ.

**ມາດຕາ 16 ພາສາທີ່ໃຊ້ໃນການດຳເນີນຄະດີ**

ໃນການດຳເນີນຄະດີ ໃຫ້ໃຊ້ພາສາລາວ, ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ທີ່ບໍ່ຮູ້ພາສາລາວ ມີສິດໃຊ້ພາສາຕົນເອງ ຫຼື ພາສາອື່ນ ໂດຍຜ່ານຜູ້ແປພາສາ.

**ມາດຕາ 17 ການຮັບປະກັນການພິຈາລະນາຄະດີ ຢູ່ທີ່ປະຊຸມສານຢ່າງເປີດເຜີຍ**

ການພິຈາລະນາຄະດີ ຢູ່ທີ່ປະຊຸມສານ ຕ້ອງດຳເນີນຢ່າງເປີດເຜີຍ ເວັ້ນເສຍແຕ່ກໍລະນີຄະດີນັ້ນ ຫາກກ່ຽວຂ້ອງກັບຄວາມລັບຂອງລັດ, ຄວາມລັບທາງການທະຫານ ຊຶ່ງຕ້ອງດຳເນີນຢ່າງປິດລັບ.

**ມາດຕາ 18 (ປັບປຸງ) ການເຄົາລົບ ແລະ ປະຕິບັດຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ**

ສານທະຫານ ອອກຄຳຕັດສິນໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຄຳຕັດສິນຂອງສານທະຫານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ກົມກອງ, ວິສາຫະກິດ, ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນ, ກຳລັງສຳຮອງ ປ້ອງກັນຊາດ, ກອງຫຼອນ, ກຳລັງປ້ອງກັນຕົວ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ. ບຸກຄົນ ແລະ ອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງ ຕ້ອງປະຕິບັດຢ່າງເຂັ້ມງວດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ.

ຄຳຕັດສິນຂອງສານທະຫານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ມີຜົນບັງຄັບປະຕິບັດ ແລະ ບໍ່ສາມາດປ່ຽນແປງໄດ້ແຕ່ຢ່າງໃດ ເວັ້ນເສຍແຕ່ກໍລະນີພິເສດ ເປັນຕົ້ນ ມີຫຼັກຖານໃໝ່ ຈຶ່ງມີສິດສະເໜີຮື້ຟື້ນຄະດີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ III
## ການຈັດຕັ້ງຂອງສານທະຫານ
### ໝວດທີ 1
### ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສານທະຫານ

**ມາດຕາ 19 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດຂອງສານທະຫານ**

ສານທະຫານ ແມ່ນ ອົງການໜຶ່ງໃນລະບົບສານປະຊາຊົນ ແຫ່ງ ສປປ ລາວ ທີ່ສ້າງຕັ້ງຂຶ້ນໃນກອງທັບປະຊາຊົນລາວ ມີພາລະບົດບາດດຳເນີນການພິຈາລະນາ ຕັດສິນ ແລະ ພິພາກສາ ຄະດີອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງກົດໝາຍສະບັບນີ້.

**ມາດຕາ 20 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສານທະຫານ**

ສານທະຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາອົບຮົມ, ໄກ່ເກ່ຍ ບັນຫາທາງແພ່ງທີ່ຕິດພັນກັບຄະດີອາຍາ, ພິຈາລະນາຕັດສິນ ຫຼື ພິພາກສາຄະດີອາຍາ;
2. ໂຄສະນາ ເຜີຍແຜ່ ກົດໝາຍ ເພື່ອໃຫ້ກຳລັງປະກອບອາວຸດປ້ອງກັນຊາດ ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ;
3. ສະເໜີແຕ່ງຕັ້ງທະນາຍຄວາມໂດຍໜ້າທີ່;
4. ຊອກຫາ, ກຳຈັດສາເຫດ ແລະ ເງື່ອນໄຂທີ່ພາໃຫ້ມີການກະທຳຜິດເກີດຂຶ້ນ;
5. ປະສານສົມທົບ ກັບ ອົງການທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຂອງຕົນ;
6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຍຸຕິທຳ ແລະ ກົດໝາຍ ຕາມກົດໝາຍ ແລະ ຕາມການມອບໝາຍ;
7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ໝວດທີ 2
### ລະບົບການຈັດຕັ້ງຂອງສານທະຫານ

**ມາດຕາ 21 (ປັບປຸງ) ລະບົບການຈັດຕັ້ງຂອງສານທະຫານ**

ລະບົບການຈັດຕັ້ງຂອງສານທະຫານ ປະກອບດ້ວຍ:

1. ສານທະຫານຂັ້ນສູງ;
2. ສານທະຫານພາກ;
3. ສານທະຫານແຂວງ, ນະຄອນຫຼວງ.

**ມາດຕາ 22 (ປັບປຸງ) ສານທະຫານຂັ້ນສູງ**

ສານທະຫານຂັ້ນສູງ ແມ່ນ ການຈັດຕັ້ງສູງສຸດ ໃນລະບົບການຈັດຕັ້ງຂອງສານທະຫານ ມີພາລະບົດບາດໃນການພິພາກສາຄະດີອາຍາ, ຄຸ້ມຄອງທາງດ້ານການຈັດຕັ້ງ, ບໍລິຫານ, ກວດກາທາງດ້ານວິຊາສະເພາະ, ຊີ້ນໍາການເຄື່ອນໄຫວ, ການປະຕິບັດໜ້າທີ່ ຂອງສານທະຫານພາກ, ສານທະຫານແຂວງ, ນະຄອນຫຼວງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ສານທະຫານຂັ້ນສູງ ຕັ້ງຢູ່ນະຄອນຫຼວງວຽງຈັນ.

**ມາດຕາ 23 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສານທະຫານຂັ້ນສູງ**

ສານທະຫານຂັ້ນສູງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອອກ ຄໍາສັ່ງ, ຄໍາຊີ້ຂາດ ແລະ ພິພາກສາ ເປັນຂັ້ນອຸທອນ ຄະດີອາຍາ ທີ່ສານທະຫານພາກ ໄດ້ມີຄໍາຕັດສິນເປັນຂັ້ນຕົ້ນ;
2. ພິຈາລະນາອອກ ຄໍາສັ່ງ, ຄໍາຊີ້ຂາດ ແລະ ພິພາກສາ ເປັນຂັ້ນລຶບລ້າງ ທາງດ້ານກົດໝາຍ ຄະດີອາຍາ ທີ່ສານທະຫານພາກ ໄດ້ມີຄໍາຕັດສິນເປັນຂັ້ນອຸທອນ;
3. ນໍາພາ ຊີ້ນໍາ, ຄຸ້ມຄອງສານທະຫານທຸກຂັ້ນ ທາງດ້ານການຈັດຕັ້ງ, ວິຊາສະເພາະ ແລະ ວຽກງານບໍລິຫານ;
4. ວາງມາດຕະການອັນຈໍາເປັນ ກ່ຽວກັບບັນຫາການຈັດຕັ້ງ, ການປັບປຸງ ແລະ ການບໍລິຫານ ສານທະຫານ;
5. ກວດກາການປະຕິບັດໜ້າທີ່ວຽກງານຂອງສານທະຫານທຸກຂັ້ນ;
6. ເຜີຍແຜ່ຂະຫຍາຍຄໍາແນະນໍາທາງດ້ານກົດໝາຍ, ມະຕິກອງປະຊຸມໃຫຍ່ຜູ້ພິພາກສາ ໃຫ້ສານທະຫານທຸກຂັ້ນ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ຄວາມເປັນເອກະພາບໃນການປະຕິບັດກົດໝາຍ;
7. ສົ່ງ ຄໍາສັ່ງ, ຄໍາຊີ້ຂາດ, ຄໍາພິພາກສາ ໃຫ້ອົງການໄອຍະການທະຫານຂັ້ນຂອງຕົນ ແລະ ສານປະຊາຊົນສູງສຸດ ເພື່ອກວດກາ;
8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຍຸຕິທໍາ ແລະ ກົດໝາຍ ຕາມກົດໝາຍ ແລະ ຕາມການມອບໝາຍ;
9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ສານປະຊາຊົນສູງສຸດ ແລະ ກະຊວງປ້ອງກັນປະເທດ ຢ່າງເປັນປົກກະຕິ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 24 (ປັບປຸງ) ສານທະຫານພາກ**

ສານທະຫານພາກ ແມ່ນ ສານໜຶ່ງໃນລະບົບການຈັດຕັ້ງຂອງສານທະຫານ, ມີພາລະບົດບາດໃນການຕັດສິນ ແລະ ພິພາກສາຄະດີອາຍາ, ຄຸ້ມຄອງທາງດ້ານການຈັດຕັ້ງ, ບໍລິຫານ, ກວດກາທາງດ້ານວິຊາສະເພາະ, ຊີ້ນໍາການເຄື່ອນໄຫວ, ການປະຕິບັດໜ້າທີ່ຂອງສານທະຫານ ແຂວງ, ນະຄອນຫຼວງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ສານທະຫານພາກ ຕັ້ງຢູ່ ພາກເໜືອ, ພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ ຕາມການຕົກລົງຂອງຄະນະປະຈໍາສະພາແຫ່ງຊາດ.

**ມາດຕາ 25 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສານທະຫານພາກ**

ສານທະຫານພາກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອອກ ຄຳສັ່ງ, ຄຳຊີ້ຂາດ ແລະ ຕັດສິນເປັນຂັ້ນຕົ້ນ ຄະດີອາຍາ ທີ່ບໍ່ຂຶ້ນກັບສິດອຳນາດຂອງສານທະຫານ ແຂວງ, ນະຄອນຫຼວງ;

2. ພິຈາລະນາອອກ ຄຳສັ່ງ, ຄຳຊີ້ຂາດ ແລະ ພິພາກສາເປັນຂັ້ນອຸທອນ ຄະດີອາຍາ ທີ່ສານທະຫານ ແຂວງ, ນະຄອນຫຼວງ ໄດ້ມີຄຳຕົກລົງເປັນຂັ້ນຕົ້ນ;

3. ຈັດຕັ້ງປະຕິບັດຄຳແນະນຳທາງດ້ານກົດໝາຍ, ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ພິພາກສາ ແລະ ປະຕິບັດ ຄຳສັ່ງ, ຄຳແນະນຳ ຂອງສານທະຫານຂັ້ນສູງ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ຄວາມເປັນເອກະພາບ ໃນການປະຕິບັດກົດໝາຍ;

4. ນຳພາ ຊີ້ນຳ ແລະ ຄຸ້ມຄອງທາງດ້ານການຈັດຕັ້ງ, ກວດກາທາງດ້ານວິຊາສະເພາະ ແລະ ການເຄື່ອນໄຫວວຽກງານຂອງຕົນ ແລະ ຂອງສານທະຫານ ແຂວງ, ນະຄອນຫຼວງ;

5. ຄົ້ນຄວ້າ ແລະ ສັງລວມ ການຈັດຕັ້ງປະຕິບັດໜ້າທີ່ ແລະ ເກັບກຳສະຖິຕິຄະດີຂອງສານ ເພື່ອລາຍງານຕໍ່ສານທະຫານຂັ້ນສູງ;

6. ສົ່ງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ໃຫ້ອົງການໄອຍະການທະຫານຂັ້ນຂອງຕົນ ແລະ ສານທະຫານຂັ້ນສູງ ເພື່ອກວດກາ;

7. ສົ່ງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ພະແນກກົດໝາຍ ແລະ ຄ້າຍຄຸມຂັງ, ຄ້າຍດັດສ້າງ, ຄ້າຍກັກຂັງຊົ່ວຄາວ ທີ່ກ່ຽວຂ້ອງ ສຳລັບໂທດຕັດອິດສະລະພາບ ເພື່ອປະຕິບັດ;

8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ສານທະຫານຂັ້ນສູງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 26 (ໃໝ່) ສານທະຫານແຂວງ, ນະຄອນຫຼວງ**

ສານທະຫານແຂວງ, ນະຄອນຫຼວງ ແມ່ນ ສານໜຶ່ງໃນລະບົບການຈັດຕັ້ງຂອງສານທະຫານ, ມີພາລະບົດບາດໃນການຕັດສິນຄະດີອາຍາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສານທະຫານແຂວງ, ນະຄອນຫຼວງ ສ້າງຕັ້ງຂຶ້ນຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ, ໃນກໍລະນີແຂວງໃດ ບໍ່ມີເງື່ອນໄຂໃນການສ້າງຕັ້ງ ມອບໃຫ້ສານທະຫານ ແຂວງ, ນະຄອນຫຼວງ ໃກ້ຄຽງ ເປັນຜູ້ພິຈາລະນາຕັດສິນ ຕາມການຕົກລົງຂອງລັດຖະມົນຕີກະຊວງປ້ອງກັນປະເທດ.

ສຳລັບການສ້າງຕັ້ງ, ການປະກອບບຸກຄະລາກອນ ຂອງສານທະຫານແຂວງ, ນະຄອນຫຼວງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 27 (ໃໝ່) ສິດ ແລະ ໜ້າທີ່ ຂອງສານທະຫານ ແຂວງ, ນະຄອນຫຼວງ**

ສານທະຫານ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອອກຄຳສັ່ງ, ຄຳຊີ້ຂາດ ແລະ ຕັດສິນເປັນຂັ້ນຕົ້ນ ຄະດີອາຍາ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບ ບໍ່ເກີນ ຫ້າປີ;

2. ຈັດຕັ້ງປະຕິບັດຄຳແນະນຳທາງດ້ານກົດໝາຍ, ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ພິພາກສາ ແລະ ປະຕິບັດ ຄຳສັ່ງ, ຄຳແນະນຳ ຂອງສານທະຫານຂັ້ນສູງ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ຄວາມເປັນເອກະພາບ ໃນການປະຕິບັດກົດໝາຍ;

3. ນຳພາ ຊີ້ນຳ ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ;

4. ຄົ້ນຄວ້າ, ສັງລວມການຈັດຕັ້ງປະຕິບັດໜ້າທີ່ ແລະ ເກັບກຳສະຖິຕິຄະດີຂອງສານ ເພື່ອລາຍງານຕໍ່ຂັ້ນເທິງຂອງຕົນ;

5. ສົ່ງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ໃຫ້ອົງການໄອຍະການທະຫານຂັ້ນຂອງຕົນ ແລະ ສານທະຫານຂັ້ນເທິງ ເພື່ອກວດກາ;

6. ສົ່ງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ໃຫ້ພະແນກກົດໝາຍ ແລະ ຄ້າຍຄຸມຂັງ, ຄ້າຍດັດສ້າງ, ຄ້າຍກັກຂັງຊົ່ວຄາວ ທີ່ກ່ຽວຂ້ອງ ສຳລັບໂທດຕັດອິດສະລະພາບ ເພື່ອປະຕິບັດ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ສານທະຫານຂັ້ນເທິງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

### ມາດຕາ 28 (ປັບປຸງ) ໂຄງປະກອບການຈັດຕັ້ງ

ສານທະຫານ ມີ ໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ສານທະຫານຂັ້ນສູງ ມີ ຄະນະປະທານ, ຄະນະສານອາຍາ ແລະ ກົງຈັກບໍລິຫານ;
2. ສານທະຫານພາກ ມີ ຄະນະສານອາຍາ ແລະ ກົງຈັກບໍລິຫານ;
3. ສານທະຫານແຂວງ, ນະຄອນຫຼວງ ມີ ຄະນະສານອາຍາ ແລະ ກົງຈັກບໍລິຫານ.

### ມາດຕາ 29 (ປັບປຸງ) ຄະນະປະທານ

ຄະນະປະທານ ແມ່ນ ຄະນະນຳຂອງ ສານທະຫານຂັ້ນສູງ ແລະ ສານທະຫານພາກ ຊຶ່ງປະກອບດ້ວຍ ປະທານສານທະຫານຂັ້ນສູງ ເປັນປະທານ, ຮອງປະທານສານທະຫານຂັ້ນສູງ ເປັນຮອງປະທານ, ຫົວໜ້າຄະນະສານອາຍາຂອງສານທະຫານຂັ້ນສູງ, ຫົວໜ້າຫ້ອງ, ປະທານສານທະຫານພາກ ແລະ ຜູ້ພິພາກສາສານທະຫານຂັ້ນສູງຈຳນວນໜຶ່ງ ເປັນສະມາຊິກ.

ຄະນະປະທານ ມີສະມາຊິກບໍ່ໃຫ້ເກີນ ສິບເອັດຄົນ.

ຄະນະປະທານຂອງສານທະຫານ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍປະທານສານປະຊາຊົນສູງສຸດ ຕາມການສະເໜີຂອງລັດຖະມົນຕີກະຊວງປ້ອງກັນປະເທດ.

ກອງປະຊຸມຄະນະປະທານ ເປີດຂຶ້ນ ຢ່າງໜ້ອຍປີລະ ສາມຄັ້ງ.

ກອງປະຊຸມຄະນະປະທານ ຈະດຳເນີນໄດ້ ກໍຕໍ່ເມື່ອຫາກມີສະມາຊິກເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນຄະນະປະທານທັງໝົດ.

ມະຕິກອງປະຊຸມຄະນະປະທານ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງ ຂອງຈຳນວນສະມາຊິກທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 30 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະປະທານ**

ຄະນະປະທານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຮ່າງນິຕິກຳຂອງສານທະຫານ ກ່ຽວກັບການປະຕິບັດກົດໝາຍ ແລະ ການດຳເນີນຄະດີໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນທົ່ວກອງທັບ;

2. ປະຕິບັດຄຳແນະນຳ ແລະ ປະເພນີສານ ຂອງສານປະຊາຊົນສູງສຸດ;

3. ຄົ້ນຄວ້າຄຳຕັດສິນປະຫານຊີວິດ ຂອງສານທະຫານ ເພື່ອສະເໜີໃຫ້ປະທານສານປະຊາຊົນສູງສຸດອອກຄຳຊີ້ຂາດ;

4. ຄົ້ນຄວ້ານຳສະເໜີກ່ຽວກັບການ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານສານທະຫານຂັ້ນສູງ, ປະທານ, ຮອງປະທານ ສານທະຫານພາກ, ສານທະຫານແຂວງ, ນະຄອນຫຼວງ ແລະ ຜູ້ພິພາກສາ ຂອງສານທະຫານທຸກຂັ້ນ ເພື່ອໃຫ້ປະທານສານປະຊາຊົນສູງສຸດ ສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;

5. ຄົ້ນຄວ້າຮ່າງບົດລາຍງານ ຂອງປະທານສານທະຫານຂັ້ນສູງ ກ່ຽວກັບການເຄື່ອນໄຫວວຽກງານຂອງສານທະຫານ ຕໍ່ ກອງປະຊຸມໃຫຍ່ຜູ້ພິພາກສາ;

6. ກະກຽມເນື້ອໃນ ກອງປະຊຸມສະຫຼຸບຖອດຖອນບົດຮຽນວຽກງານສານທະຫານ ທົ່ວກອງທັບ;

7. ຄົ້ນຄວ້າ ແລະ ໃຫ້ຄຳເຫັນກ່ຽວກັບ ວຽກງານພັກ-ວຽກງານການເມືອງ, ວຽກງານນະໂຍບາຍ ແລະ ວຽກງານອື່ນທີ່ປະທານສານທະຫານຂັ້ນສູງ ເຫັນວ່າມີຄວາມຈຳເປັນ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 31 (ປັບປຸງ) ຄະນະສານອາຍາ**

ສານທະຫານຂັ້ນສູງ, ສານທະຫານພາກ ແລະ ສານທະຫານແຂວງ, ນະຄອນຫຼວງ ມີຄະນະສານອາຍາ ຊຶ່ງປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ພະນັກງານວິຊາການກົດໝາຍ.

ຄະນະສານອາຍາ ຂອງສານທະຫານຂັ້ນສູງ ມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂໍ້ 1, 2 ແລະ ຂໍ້ 10 ຂອງກົດໝາຍສະບັບນີ້.

ຄະນະສານອາຍາ ຂອງສານທະຫານພາກ ມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂໍ້ 1, 2 ແລະ ຂໍ້ 9 ຂອງກົດໝາຍສະບັບນີ້.

ຄະນະສານອາຍາ ຂອງສານທະຫານ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂໍ້ 1 ແລະ ຂໍ້ 8 ຂອງກົດໝາຍສະບັບນີ້.

**ມາດຕາ 32 (ປັບປຸງ) ກົງຈັກບໍລິຫານ**

ສານທະຫານແຕ່ລະຂັ້ນ ມີ ກົງຈັກບໍລິຫານ ດັ່ງນີ້:

1. ສານທະຫານຂັ້ນສູງ ມີ ຫ້ອງ ແລະ ພະແນກ;

2. ສານທະຫານພາກ ມີ ຫ້ອງການ ແລະ ພະແນກ;

3. ສານທະຫານແຂວງ, ນະຄອນຫຼວງ ມີ ຫ້ອງການ ແລະ ພະແນກ.

ສຳລັບ ຈຳນວນພົນ ແລະ ການເຄື່ອນໄຫວວຽກງານຂອງກົງຈັກບໍລິຫານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 33 ໂຄງປະກອບບຸກຄະລາກອນ**

ສານທະຫານທຸກຂັ້ນ ປະກອບດ້ວຍ ປະທານ, ຮອງປະທານ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ, ພະນັກງານວິຊາການກົດໝາຍ ແລະ ພະນັກງານບໍລິຫານ.

**ມາດຕາ 34 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ**

ປະທານສານທະຫານຂັ້ນສູງ ເປັນຮອງປະທານສານປະຊາຊົນສູງສຸດ.

ປະທານສານທະຫານຂັ້ນສູງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມຄຳສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງໄດ້ຮັບຄຳເຫັນດີຈາກລັດຖະມົນຕີກະຊວງປ້ອງກັນປະເທດ.

ຮອງປະທານສານທະຫານຂັ້ນສູງ, ປະທານ, ຮອງປະທານສານທະຫານພາກ, ສານທະຫານ ແຂວງ, ນະຄອນຫຼວງ ແລະ ຜູ້ພິພາກສາ ຂອງສານທະຫານທຸກຂັ້ນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມຄຳສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງໄດ້ຮັບຄຳສະເໜີຂອງປະທານສານທະຫານຂັ້ນສູງ ແລະ ຄຳເຫັນດີຈາກລັດຖະມົນຕີກະຊວງປ້ອງກັນປະເທດ.

ຫົວໜ້າ, ຮອງຫົວໜ້າ ຫ້ອງ, ຫົວໜ້າ, ຮອງຫົວໜ້າ ຫ້ອງການ, ຫົວໜ້າ, ຮອງຫົວໜ້າຄະນະສານອາຍາ, ຫົວໜ້າ, ຮອງຫົວໜ້າ ພະແນກ ຂອງສານທະຫານທຸກຂັ້ນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງປ້ອງກັນປະເທດ ຕາມການສະເໜີຂອງປະທານສານທະຫານຂັ້ນສູງ.

**ມາດຕາ 35 (ປັບປຸງ) ສິດ ແລະ ໜ້າທີ່ ຂອງປະທານສານທະຫານຂັ້ນສູງ**

ປະທານສານທະຫານຂັ້ນສູງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນັ່ງເປັນປະທານ ໃນຄະນະສານຕັດສິນ ຂອງສານທະຫານຂັ້ນສູງ;
2. ນຳພາ ຊີ້ນຳ ວຽກງານຂອງສານທະຫານທຸກຂັ້ນ, ຮຽກໂຮມກອງປະຊຸມຄະນະປະທານ, ກອງປະຊຸມວິຊາການຂອງສານທະຫານ, ຄຸ້ມຄອງ ແລະ ກວດກາການເຄື່ອນໄຫວວຽກງານຂອງສານທະຫານ;
3. ຄົ້ນຄວ້ານຳສະເໜີກ່ຽວກັບການ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານສານທະຫານຂັ້ນສູງ, ປະທານ, ຮອງປະທານສານທະຫານພາກ, ສານທະຫານ ແຂວງ, ນະຄອນຫຼວງ ແລະ ຜູ້ພິພາກສາ ເພື່ອໃຫ້ປະທານສານປະຊາຊົນສູງສຸດ ສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ພາຍຫຼັງໄດ້ຮັບຄຳເຫັນດີຈາກລັດຖະມົນຕີກະຊວງປ້ອງກັນປະເທດ;
4. ສະເໜີລັດຖະມົນຕີກະຊວງປ້ອງກັນປະເທດ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າຫ້ອງ, ຫົວໜ້າ, ຮອງຫົວໜ້າ ຫ້ອງການ, ຫົວໜ້າ, ຮອງຫົວໜ້າ ຄະນະສານອາຍາ, ຫົວໜ້າ, ຮອງຫົວໜ້າ ພະແນກ ຂອງສານທະຫານທຸກຂັ້ນ;
5. ປະຕິບັດຄຳແນະນຳ ຂອງປະທານສານປະຊາຊົນສູງສຸດ ກ່ຽວກັບການປະຕິບັດກົດໝາຍ ແລະ ການດຳເນີນຄະດີອາຍາ ເພື່ອໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນທົ່ວກອງທັບ;
6. ອອກ ຄຳສັ່ງ ແລະ ຄຳຊີ້ຂາດ, ຂໍ້ຕົກລົງ, ຄຳແນະນຳ ແລະ ນິຕິກຳອື່ນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
7. ສະເໜີຕໍ່ລັດຖະມົນຕີກະຊວງປ້ອງກັນປະເທດ ຫຼື ປະທານສານປະຊາຊົນສູງສຸດ ເພື່ອປະຕິບັດນະໂຍບາຍ, ຍ້ອງຍໍ, ເລື່ອນຊັ້ນ ແລະ ລົງວິໄນ ພະນັກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມແຕ່ລະກໍລະນີ;

8. ລາຍງານການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານທະຫານ ຕໍ່ກອງປະຊຸມໃຫຍ່ຜູ້ພິພາກສາ, ກອງປະຊຸມວຽກງານສານທະຫານທົ່ວກອງທັບ, ປະທານສານປະຊາຊົນສູງສຸດ ແລະ ລັດຖະມົນຕີກະຊວງປ້ອງກັນປະເທດ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 36 ຮອງປະທານສານທະຫານຂັ້ນສູງ**

ຮອງປະທານສານທະຫານຂັ້ນສູງ ມີສິດນັ່ງເປັນປະທານໃນຄະນະສານຕັດສີນຂອງສານທະຫານຂັ້ນຂອງຕົນ.

ຮອງປະທານສານທະຫານຂັ້ນສູງ ມີໜ້າທີ່ຊ່ວຍປະທານສານທະຫານຂັ້ນສູງ ໃນການນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ຂອງປະທານ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງປະທານສານທະຫານຂັ້ນສູງ.

ໃນກໍລະນີປະທານສານທະຫານຂັ້ນສູງ ຕິດຂັດ ແມ່ນ ຮອງປະທານສານທະຫານຂັ້ນສູງຜູ້ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 37 ສິດ ແລະ ໜ້າທີ່ ຂອງປະທານສານທະຫານພາກ**

ປະທານສານທະຫານພາກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນັ່ງເປັນປະທານ ໃນຄະນະສານຕັດສີນຂອງສານທະຫານພາກ;
2. ນຳພາ ຊີ້ນຳການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານຂັ້ນຂອງຕົນ;
3. ອອກຄຳສັ່ງ ແລະ ຄຳຊີ້ຂາດ;
4. ໄດ້ຮັບການບຳລຸງ, ຍົກລະດັບ ທາງດ້ານທິດສະດີ, ວິຊາສະເພາະ ແລະ ວຽກງານອື່ນ;
5. ລາຍງານການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງສານທະຫານຂັ້ນຂອງຕົນ ຕໍ່ ປະທານສານທະຫານຂັ້ນສູງ ແລະ ເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ພິພາກສາ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 38 ຮອງປະທານສານທະຫານພາກ**

ຮອງປະທານສານທະຫານພາກ ມີສິດ ນັ່ງເປັນປະທານ ໃນຄະນະສານຕັດສີນຂອງສານທະຫານຂັ້ນຂອງຕົນ.

ຮອງປະທານສານທະຫານພາກ ມີໜ້າທີ່ ຊ່ວຍປະທານສານທະຫານຂັ້ນຂອງຕົນ ໃນການປະຕິບັດໜ້າທີ່ວຽກງານ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງປະທານສານທະຫານພາກ.

ໃນກໍລະນີປະທານສານທະຫານພາກ ຕິດຂັດ ແມ່ນ ຮອງປະທານສານທະຫານພາກຜູ້ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 39 (ໃໝ່) ສິດ ແລະ ໜ້າທີ່ ຂອງປະທານສານທະຫານແຂວງ, ນະຄອນຫຼວງ**

ປະທານສານທະຫານ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນັ່ງເປັນປະທານ ໃນຄະນະສານຕັດສີນ ຂອງສານທະຫານ ແຂວງ, ນະຄອນຫຼວງ;
2. ນຳພາ ຊີ້ນຳ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານຂັ້ນຂອງຕົນ;
3. ອອກຄຳສັ່ງ ແລະ ຄຳຊີ້ຂາດ;
4. ໄດ້ຮັບການບຳລຸງ, ຍົກລະດັບ ທາງດ້ານທິດສະດີ, ວິຊາສະເພາະ ແລະ ວຽກງານອື່ນ;
5. ລາຍງານການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ສານທະຫານຂັ້ນເທິງ, ກອງປະຊຸມວຽກງານສານທະຫານທົ່ວກອງທັບ ແລະ ເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ພິພາກສາ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 40 (ໃໝ່) ຮອງປະທານສານທະຫານ ແຂວງ, ນະຄອນຫຼວງ**

ຮອງປະທານສານທະຫານ ແຂວງ, ນະຄອນຫຼວງ ມີສິດ ນັ່ງເປັນປະທານໃນຄະນະສານຕັດສີນ ຂອງສານທະຫານຂັ້ນຂອງຕົນ.

ຮອງປະທານສານທະຫານ ແຂວງ, ນະຄອນຫຼວງ ມີໜ້າທີ່ ຊ່ວຍປະທານສານທະຫານຂັ້ນຂອງຕົນໃນການປະຕິບັດໜ້າທີ່ວຽກງານ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງປະທານສານທະຫານຂັ້ນຂອງຕົນ.

ໃນກໍລະນີ ປະທານສານທະຫານ ແຂວງ, ນະຄອນຫຼວງ ຕິດຂັດ ແມ່ນ ຮອງປະທານສານທະຫານ ແຂວງ, ນະຄອນຫຼວງ ຜູ້ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

**ມາດຕາ 41 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ພິພາກສາ**

ຜູ້ພິພາກສາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສຳນວນຄະດີທີ່ໄດ້ຮັບມອບໝາຍ;
2. ເອົາຄຳໃຫ້ການຂອງ ໂຈດທາງແພ່ງ, ຈຳເລີຍ ແລະ ບຸກຄົນອື່ນ ທີ່ເຂົ້າຮ່ວມໃນການດຳເນີນຄະດີ;
3. ເກັບກຳຂໍ້ມູນຫຼັກຖານກ່ຽວກັບຄະດີ;
4. ໄກ່ເກ່ຍບັນຫາທາງແພ່ງ ທີ່ຕິດພັນກັບຄະດີອາຍາ;
5. ນັ່ງເປັນຄະນະສານຕັດສີນຄະດີ;
6. ໄດ້ຮັບການ ບຳລຸງ, ຍົກລະດັບທາງດ້ານທິດສະດີ, ວິຊາສະເພາະ ແລະ ວຽກງານຜູ້ພິພາກສາ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 42 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ຊ່ວຍຜູ້ພິພາກສາ**

ຜູ້ຊ່ວຍຜູ້ພິພາກສາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍຜູ້ພິພາກສາ ໃນການຄົ້ນຄວ້າສຳນວນຄະດີ;
2. ຊ່ວຍຜູ້ພິພາກສາ ໃນການເອົາຄຳໃຫ້ການຂອງ ໂຈດທາງແພ່ງ, ຈຳເລີຍ ແລະ ບຸກຄົນອື່ນ ທີ່ເຂົ້າຮ່ວມໃນການດຳເນີນຄະດີ;
3. ຊ່ວຍຜູ້ພິພາກສາ ໃນການຂຽນຄຳຕັດສີນ ຫຼື ຄຳພິພາກສາຂອງສານ;

4. ເຂົ້າຮ່ວມໃນການໄກ່ເກ່ຍບັນຫາທາງແພ່ງ ທີ່ຕິດພັນກັບຄະດີອາຍາ;

5. ໄດ້ຮັບການ ບຳລຸງ, ຍົກລະດັບທາງດ້ານທິດສະດີ, ວິຊາສະເພາະ ແລະ ວຽກງານຜູ້ຊ່ວຍຜູ້ພິພາກສາ;

6. ສະຫຼຸບ ແລະ ລາຍງານຄະດີ ທີ່ຕົນຮັບຜິດຊອບຄົ້ນຄວ້າຕໍ່ຜູ້ພິພາກສາ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

ສຳລັບມາດຕະຖານຂອງຜູ້ຊ່ວຍຜູ້ພິພາກສາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 43 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຈ່າສານ**

ຈ່າສານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບ ແລະ ກວດກາ ສຳນວນຄະດີ, ຄຳຮ້ອງຂໍອຸທອນ, ຄຳຮ້ອງຂໍລົບລ້າງ, ຂຶ້ນຟ້ອງ, ເຮັດບັນຊີຄະດີ, ຈັດລຽງເອກະສານໃນສຳນວນຄະດີ;

2. ອອກ ໝາຍຮຽກ, ໝາຍເຊີນ ຕາມການແນະນຳຂອງຜູ້ພິພາກສາ;

3. ເຂົ້າຮ່ວມບັນທຶກ ໃນການເອົາຄຳໃຫ້ການ ຫຼື ໃນການໄກ່ເກ່ຍ;

4. ກະກຽມ, ແຈ້ງລະບຽບການ ແລະ ບັນທຶກປຶ້ມປະຊຸມສານ ໃນທີ່ປະຊຸມສານ;

5. ອະທິບາຍຊີ້ແຈງເຫດຜົນໃຫ້ຄູ່ຄວາມໃນຄະດີ ເຂົ້າໃຈກ່ຽວກັບ ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ ພ້ອມທັງແຈ້ງສິດໃນການຂໍອຸທອນ ຫຼື ຂໍລົບລ້າງ;

6. ເຊັນຢັ້ງຢືນ ຄຳຕັດສິນ ຫຼື ຄຳພິພາກສາ ແລະ ເອກະສານອື່ນ ຕາມກົດໝາຍ;

7. ເຮັດບັນຊີ, ເກັບມ້ຽນຂອງກາງຄະດີ ແລະ ຄຸ້ມຄອງເງິນຄ່າທຳນຽມສານ ຕາມກົດໝາຍ, ສະຫຼຸບສະຖິຕິຄະດີ, ສົ່ງ ຄຳຕັດສິນ ຫຼື ຄຳພິພາກສາ ໃຫ້ອົງການໄອຍະການທະຫານທີ່ກ່ຽວຂ້ອງ ແລະ ສານຂັ້ນເທິງເພື່ອກວດກາ;

8. ໄດ້ຮັບການ ບຳລຸງ, ຍົກລະດັບທາງດ້ານທິດສະດີ, ວິຊາສະເພາະ ແລະ ວຽກງານຈ່າສານ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

ສຳລັບມາດຕະຖານຂອງຈ່າສານ ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 44 (ໃໝ່) ພະນັກງານວິຊາການກົດໝາຍ**

ພະນັກງານວິຊາການກົດໝາຍ ແມ່ນ ຜູ້ຮຽນຈົບກົດໝາຍ ຊຶ່ງເຮັດວຽກຢູ່ສານທະຫານ.

ພະນັກງານວິຊາການກົດໝາຍ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍວຽກຈ່າສານໃນການດຳເນີນຄະດີ;

2. ເຂົ້າຮ່ວມໃນການດຳເນີນຄະດີ ແລະ ບັນທຶກຄຳໃຫ້ການ;

3. ຊ່ວຍວຽກຈ່າສານໃນການປະຊຸມສານ;

4. ເຂົ້າຮ່ວມໃນການເກັບກຳຂໍ້ມູນຫຼັກຖານ ແລະ ເຮັດບົດບັນທຶກຕ່າງໆ;

5. ລົງລາຍເຊັນໃນບົດບັນທຶກຄຳໃຫ້ການ, ເອກະສານອື່ນ ຕາມໜ້າທີ່ ຫຼື ຕາມການມອບໝາຍ;

6. ໄດ້ຮັບການ ບຳລຸງ, ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະ ແລະ ວິຊາການ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 45 (ໃໝ່) ພະນັກງານບໍລິຫານ**

ພະນັກງານບໍລິຫານ ແມ່ນ ພະນັກງານເຮັດວຽກກ່ຽວກັບການບໍລິຫານຂອງສານທະຫານ ຕາມຫຼັກວິຊາສະເພາະໃນແຕ່ລະກິຈະການບໍລິຫານ.

ສິດ ແລະ ໜ້າທີ່ຂອງພະນັກງານບໍລິຫານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ IV

# ຜູ້ພິພາກສາຂອງສານທະຫານ

## ໝວດທີ 1

## ມາດຕະຖານ, ຊັ້ນ ແລະ ການປົກປ້ອງຜູ້ພິພາກສາ

**ມາດຕາ 46 (ປັບປຸງ) ຜູ້ພິພາກສາ**

ຜູ້ພິພາກສາ ແມ່ນ ຜູ້ພິຈາລະນາຕັດສິນ ແລະ ພິພາກສາຄະດີ ໃນນາມລັດ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກຄະນະປະຈຳສະພາແຫ່ງຊາດ.

ມີແຕ່ຜູ້ພິພາກສາທີ່ໄດ້ຮັບການແຕ່ງຕັ້ງຕາມກົດໝາຍເທົ່ານັ້ນ ຈຶ່ງສາມາດປະກອບເຂົ້າເປັນຄະນະສານຕັດສິນ.

**ມາດຕາ 47 (ປັບປຸງ) ມາດຕະຖານຂອງຜູ້ພິພາກສາ**

ຜູ້ພິພາກສາຂອງສານທະຫານ ມີມາດຕະຖານ ດັ່ງນີ້:

1. ເປັນນາຍທະຫານຂອງກອງທັບປະຊາຊົນລາວ ແຕ່ຊັ້ນ ຮ້ອຍເອກຂຶ້ນໄປ;
2. ເປັນຜູ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນ, ຈັນຍາທຳ, ມີແບບແຜນນຳພາບັນຊາ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະ ຮັບໃຊ້ຜົນປະໂຫຍດຂອງກອງທັບ;
3. ເປັນຜູ້ມີລະດັບການສຶກສາດ້ານກົດໝາຍ ແຕ່ຊັ້ນສູງຂຶ້ນໄປ ແລະ ໄດ້ຜ່ານການຝຶກອົບຮົມຫຼັກສູດສຳລັບຜູ້ພິພາກສາ;
4. ບໍ່ເຄີຍຖືກລົງວິໄນ ຫຼື ຖືກລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ;
5. ຕ້ອງຮູ້ພາສາຕ່າງປະເທດໃດໜຶ່ງ ແລະ ສາມາດນຳໃຊ້ຄອມພິວເຕີ;
6. ມີສຸຂະພາບດີ.

ນອກຈາກມາດຕະຖານທີ່ໄດ້ກຳນົດໄວ້ໃນມາດຕານີ້ແລ້ວ ຍັງຕ້ອງປະຕິບັດຕາມກົດໝາຍວ່າດ້ວຍຜູ້ພິພາກສາ.

**ມາດຕາ 48 (ໃໝ່) ຊັ້ນຂອງຜູ້ພິພາກສາ**

ຜູ້ພິພາກສາຂອງສານທະຫານ ມີຊັ້ນຂອງຕົນ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຜູ້ພິພາກສາ.

**ມາດຕາ 49 (ປັບປຸງ) ການປົກປ້ອງຜູ້ພິພາກສາ**

ຜູ້ພິພາກສາຂອງສານທະຫານ ໄດ້ຮັບການປົກປ້ອງຕາມກົດໝາຍຈາກ ການແກ້ແຄ້ນ, ຂົ່ມຂູ່ຕໍ່ ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດສັກສີ, ຊື່ສຽງ, ຊັບສິນສ່ວນຕົວ ຫຼື ຄອບຄົວ.

ຜູ້ພິພາກສາຂອງສານທະຫານ ຈະບໍ່ຖືກດຳເນີນຄະດີອາຍາ ຫຼື ຈັບຕົວ, ກັກຕົວ, ກັກຂັງ ຖ້າບໍ່ໄດ້ຮັບຄຳເຫັນດີຈາກຄະນະປະຈຳສະພາແຫ່ງຊາດ. ໃນກໍລະນີໄດ້ຈັບຕົວ ຜູ້ພິພາກສາຂອງສານທະຫານ ທີ່ກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ເຈົ້າໜ້າທີ່ ຕ້ອງລາຍງານປະທານສານທະຫານທີ່ກ່ຽວຂ້ອງ ແລະ ສານທະຫານຂັ້ນສູງ ເພື່ອລາຍງານຕໍ່ລັດຖະມົນຕີກະຊວງປ້ອງກັນປະເທດ, ປະທານສານປະຊາຊົນສູງສຸດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນທັນທີ ເພື່ອຂໍຄຳເຫັນກ່ຽວກັບການດຳເນີນຄະດີໃນຂັ້ນຕໍ່ໄປ.

**ມາດຕາ 50 (ໃໝ່) ເງິນອຸດໜູນຜູ້ພິພາກສາ**

ຜູ້ພິພາກສາຂອງສານທະຫານແຕ່ລະຂັ້ນ ໄດ້ຮັບເງິນອຸດໜູນວິຊາຊີບ ຕາມການຕົກລົງເຫັນດີຂອງກະຊວງປ້ອງກັນປະເທດ ຕາມການສະເໜີຂອງປະທານສານທະຫານຂັ້ນສູງ.

## ໝວດທີ 2
## ກອງປະຊຸມຜູ້ພິພາກສາຂອງສານທະຫານ

**ມາດຕາ 51 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງກອງປະຊຸມຜູ້ພິພາກສາ**

ກອງປະຊຸມຜູ້ພິພາກສາຂອງສານທະຫານ ແມ່ນ ການຈັດຕັ້ງສູງສຸດ ທາງດ້ານວິຊາການ, ມີພາລະບົດບາດຊີ້ນຳສານທະຫານ ໃນການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນທົ່ວກອງທັບ.

ກອງປະຊຸມຜູ້ພິພາກສາຂອງສານທະຫານ ປະກອບດ້ວຍ ປະທານ, ຮອງປະທານ, ຫົວໜ້າຄະນະສານ ແລະ ຜູ້ພິພາກສາທັງໝົດຂອງສານທະຫານທຸກຂັ້ນ. ນອກຈາກນີ້ ອາດຈະເຊີນ ຄະນະນຳ, ຂະແໜງການອື່ນທີ່ກ່ຽວຂ້ອງເຂົ້າຮ່ວມນຳ. ບຸກຄົນທີ່ຖືກເຊີນເຂົ້າຮ່ວມນັ້ນ ມີສິດສະເໜີຄຳຄິດຄຳເຫັນ ແຕ່ບໍ່ມີສິດລົງຄະແນນສຽງ.

**ມາດຕາ 52 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງປະຊຸມຜູ້ພິພາກສາ**

ກອງປະຊຸມຜູ້ພິພາກສາຂອງສານທະຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຟັງບົດລາຍງານ ຂອງສານທະຫານແຕ່ລະຂັ້ນ ກ່ຽວກັບການປະຕິບັດວຽກງານວິຊາການ ແລະ ທິດທາງແຜນການໃນຕໍ່ໜ້າ ຂອງສານທະຫານ;
2. ຕີລາຄາ ແລະ ສັງລວມ ສະຖິຕິສານ, ການປະຕິບັດວຽກງານ ແລະ ການນຳໃຊ້ກົດໝາຍຂອງສານທະຫານ;
3. ກວດກາຄືນຄຳຕົກລົງຂອງສານທະຫານທຸກຂັ້ນ ທີ່ຜິດພາດ ເພື່ອແນະນຳໃຫ້ສານທີ່ມີສິດອຳນາດກ່ຽວຂ້ອງແກ້ໄຂ ໃຫ້ສອດຄ່ອງກັບກົດໝາຍ;
4. ກຳນົດທິດທາງການປັບປຸງການຈັດຕັ້ງຂອງສານທະຫານ;
5. ພິຈາລະນາບັນຫາອື່ນ ທີ່ສຳຄັນ ຊຶ່ງພົວພັນກັບວຽກງານຂອງສານທະຫານ.

**ມາດຕາ 53 (ປັບປຸງ) ການຮຽກໂຮມກອງປະຊຸມຜູ້ພິພາກສາ**

ກອງປະຊຸມຜູ້ພິພາກສາຂອງສານທະຫານ ເປີດຂຶ້ນໜຶ່ງປີ ຕໍ່ຄັ້ງ ໂດຍການຮຽກໂຮມຂອງປະທານສານທະຫານຂັ້ນສູງ.

ກອງປະຊຸມຜູ້ພິພາກສາຂອງສານທະຫານ ຈະດຳເນີນໄດ້ ກໍຕໍ່ເມື່ອມີຜູ້ພິພາກສາເຂົ້າຮ່ວມ ຢ່າງໜ້ອຍສອງສ່ວນສາມ ຂອງຈຳນວນຜູ້ພິພາກສາທັງໝົດ.

ມະຕິກອງປະຊຸມຜູ້ພິພາກສາຂອງສານທະຫານ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທີ່ເຂົ້າຮ່ວມກອງປະຊຸມ.

ນອກຈາກນີ້ ຍັງມີກອງປະຊຸມວຽກງານສານທະຫານທົ່ວກອງທັບ ຊຶ່ງເປີດຂຶ້ນ ຫ້າປີ ຕໍ່ຄັ້ງ ໂດຍການຮຽກໂຮມຂອງລັດຖະມົນຕີກະຊວງປ້ອງກັນປະເທດ. ສຳລັບ ສິດ ແລະ ໜ້າທີ່ ຂອງກອງປະຊຸມດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ V
## ລະບອບວິທີເຮັດວຽກ

**ມາດຕາ 54 (ປັບປຸງ) ລະບອບເຮັດວຽກ**

ສານທະຫານຂັ້ນສູງ ຄຸ້ມຄອງທາງດ້ານການຈັດຕັ້ງ, ບໍລິຫານ ແລະ ຊີ້ນຳການເຄື່ອນໄຫວປະຕິບັດໜ້າທີ່, ກວດກາທາງດ້ານວິຊາສະເພາະ ຂອງສານທະຫານພາກ ແລະ ສານທະຫານ ແຂວງ, ນະຄອນຫຼວງ.

ການເຮັດວຽກຂອງສານທະຫານ ຕ້ອງດຳເນີນບົນພື້ນຖານການເຄົາລົບຄວາມເປັນເອກະລາດຂອງຜູ້ພິພາກສາ ໂດຍປະສານສົມທົບກັບຫຼັກການເຮັດວຽກເປັນໝູ່ຄະນະ, ສອດຄ່ອງກັບກົດໝາຍ ເພື່ອຮັບປະກັນການຕັດສິນ ແລະ ການພິພາກສາຄະດີ ໃຫ້ມີຄວາມ ຖືກຕ້ອງ ແລະ ຍຸຕິທຳ.

ສານທະຫານຂັ້ນເທິງ ກວດກາສານທະຫານຂັ້ນລຸ່ມ ໃນການຕັດສິນ ແລະ ພິພາກສາຄະດີ.

**ມາດຕາ 55 (ປັບປຸງ) ວິທີເຮັດວຽກ**

ສານທະຫານ ປະຕິບັດໜ້າທີ່ວຽກງານເປັນໝູ່ຄະນະ ໂດຍມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ຄະນະສານອາຍາ, ກົງຈັກບໍລິຫານ ແລະ ບຸກຄົນທີ່ກ່ຽວຂ້ອງ, ເຮັດວຽກຢ່າງມີແຜນການ, ກວດກາ, ສະຫຼຸບ, ປະເມີນຜົນ, ຖອດຖອນບົດຮຽນ, ລາຍງານ, ຂໍຄຳເຫັນຊີ້ນຳຈາກຂັ້ນເທິງຂອງຕົນ, ມີການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 56 ການເຂົ້າຮ່ວມ ແລະ ການຕິດຕາມກວດກາ ຂອງອົງການໄອຍະການທະຫານ ໃນການດຳເນີນຄະດີຂອງສານທະຫານ**

ອົງການໄອຍະການທະຫານ ເຂົ້າຮ່ວມໃນການດຳເນີນຄະດີຢູ່ທີ່ປະຊຸມສານ ແລະ ຕິດຕາມກວດກາການປະຕິບັດກົດໝາຍ ຂອງສານທະຫານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 57 (ປັບປຸງ) ການເຂົ້າຮ່ວມຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ກົມກອງ ໃນການດຳເນີນຄະດີຂອງສານທະຫານ**

ຜູ້ຕາງໜ້າແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ກົມກອງທີ່ກ່ຽວຂ້ອງ ເຂົ້າຮ່ວມໃນການດຳເນີນຄະດີ ຕາມການສະເໜີຂອງສານທະຫານ ຕາມລະບຽບການ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ ຫຼື ບຸກຄົນ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ດ້ວຍການຊີ້ແຈງ, ໃຫ້ຂໍ້ມູນ, ອະທິບາຍ ແລະ ໃຫ້ເຫດຜົນກ່ຽວກັບຄະດີ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 58 (ປັບປຸງ) ຂໍ້ຫ້າມ ສຳລັບພະນັກງານສານທະຫານ**

ຫ້າມ ພະນັກງານສານທະຫານ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕຳແໜ່ງ, ສິດອຳນາດ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ ຫຼື ຍາດພີ່ນ້ອງຂອງຕົນ;
2. ບັງຄັບ ນາບຂູ່, ນຳໃຊ້ສິດ, ປະຕິບັດໜ້າທີ່ເກີນຂອບເຂດ ແລະ ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການດຳເນີນຄະດີ;
3. ລຳອຽງ ຫຼື ເຂົ້າຂ້າງອອກຂາ ທີ່ພາໃຫ້ເກີດມີການຕັດສິນ ຫຼື ພິພາກສາຄະດີຜິດພາດ;
4. ກັກສຳນວນຄະດີ, ກົດໜ່ວງ ຖ່ວງດຶງເອກະສານ ເພື່ອຫາຜົນປະໂຫຍດ;
5. ເປີດເຜີຍຄວາມລັບ ກ່ອນການຕັດສິນຄະດີ ເພື່ອຫາຜົນປະໂຫຍດ;
6. ທວງ, ຮຽກ, ຮັບເອົາສິນບົນຈາກຄູ່ຄວາມ;
7. ເປັນທີ່ປຶກສາທາງດ້ານກົດໝາຍ, ພົວພັນກັບຄູ່ຄວາມ ເພື່ອຫາຜົນປະໂຫຍດຈາກຄະດີ;
8. ປິດບັງ, ຊຸກເຊື່ອງເອກະສານ, ຫຼັກຖານທີ່ມີຢູ່ໃນສຳນວນຄະດີ ແລະ ຂອງກາງຄະດີ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 59 ຂໍ້ຫ້າມ ສຳລັບຜູ້ເຂົ້າຮ່ວມ ໃນການດຳເນີນຄະດີ**

ຫ້າມ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ບັງຄັບ, ນາບຂູ່ ພະນັກງານສານທະຫານ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ;
2. ລາຍງານ, ສະໜອງຂໍ້ມູນ, ເອກະສານ ບໍ່ຖືກກັບຄວາມຈິງ, ຊຸກເຊື່ອງ, ທຳລາຍຂໍ້ມູນ, ເອກະສານ, ຫຼັກຖານທີ່ມີຢູ່ໃນສຳນວນຄະດີ ແລະ ຂອງກາງຄະດີ;
3. ຫຼົບຫຼີກຈາກການດຳເນີນຄະດີ ແລະ ການໃຫ້ການຕໍ່ສານ;
4. ແຊກແຊງ, ຊີ້ນຳການດຳເນີນຄະດີ;
5. ໃຫ້ສິນບົນພະນັກງານທີ່ດຳເນີນຄະດີ;
6. ໝິ່ນປະໝາດ, ປ້ອຍດ່າ, ນິນທາ, ໃສ່ຮ້າຍ ພະນັກງານສານທະຫານ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 60 (ປັບປຸງ) ຂໍ້ຫ້າມ ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກໍາ ດັ່ງນີ້:

1. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງການດໍາເນີນການຕັດສີນ ແລະ ພິພາກສາຄະດີ;
2. ນາບຂູ່, ທໍາຮ້າຍພະນັກງານສານທະຫານ;
3. ມີການກະທໍາທີ່ພາໃຫ້ການຕັດສີນຄະດີບໍ່ໄດ້ຮັບຄວາມເປັນທໍາ;
4. ໝິ່ນປະໝາດ, ປ້ອຍດ່າ, ນິນທາ, ໃສ່ຮ້າຍ ພະນັກງານສານທະຫານ;
5. ປົກປິດ, ເຊື່ອງອໍາ, ທໍາລາຍຫຼັກຖານ, ຂອງກາງທີ່ກ່ຽວຂ້ອງໃນຄະດີ ແລະ ປົກປ້ອງຜູ້ກະທໍາຜິດ;
6. ຍົກຍ້າຍປະທານ, ຮອງປະທານ ແລະ ຜູ້ພິພາກສາສານທະຫານ ໂດຍບໍ່ມີມະຕິຂອງຄະນະປະຈໍາສະພາແຫ່ງຊາດ;
7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຕິດຕາມ ກວດກາ ວຽກງານສານທະຫານ

**ມາດຕາ 61 (ໃໝ່) ການຕິດຕາມ ກວດກາ ວຽກງານສານທະຫານ**

ການຕິດຕາມ ກວດກາ ວຽກງານສານທະຫານ ມີ ດັ່ງນີ້:

1. ການຕິດຕາມ ກວດກາພາຍໃນ ຊຶ່ງແມ່ນ ກະຊວງປ້ອງກັນປະເທດ ແລະ ສານປະຊາຊົນສູງສຸດ ຕິດຕາມ ກວດກາ ວຽກງານສານທະຫານທຸກຂັ້ນ; ສານທະຫານຂັ້ນສູງ ຕິດຕາມ ກວດກາ ວຽກງານສານທະຫານຂັ້ນລຸ່ມ;
2. ການຕິດຕາມ ກວດກາ ພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ນອກຈາກນີ້ ຍັງມີອົງການໄອຍະການທະຫານຂັ້ນສູງ ແລະ ອົງການໄອຍະການປະຊາຊົນສູງສຸດ ເປັນອົງການຕິດຕາມ ກວດກາ.

**ມາດຕາ 62 (ໃໝ່) ເນື້ອໃນການຕິດຕາມ ກວດກາ**

ການຕິດຕາມ ກວດກາ ວຽກງານສານທະຫານ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສານທະຫານ;
2. ການປະຕິບັດກົດໝາຍ ຂອງສານທະຫານ ເປັນຕົ້ນ ການພິຈາລະນາຕັດສີນ, ພິພາກສາຄະດີ;
3. ການຈັດຕັ້ງ, ບຸກຄະລາກອນ, ງົບປະມານ ແລະ ພາຫະນະ, ອຸປະກອນຮັບໃຊ້ຂອງສານທະຫານ;
4. ການຈັດຕັ້ງປະຕິບັດນະໂຍບາຍ ແລະ ມາດຕະການ ຕໍ່ພະນັກງານສານທະຫານ;
5. ເນື້ອໃນອື່ນທີ່ເຫັນວ່າຈໍາເປັນ.

**ມາດຕາ 63 (ໃໝ່) ຮູບການການຕິດຕາມກວດກາ**

ການຕິດຕາມ ກວດກາ ວຽກງານສານທະຫານ ມີສາມຮູບການ ດັ່ງນີ້:

1. ການຕິດຕາມ ກວດກາ ຢ່າງເປັນລະບົບປົກກະຕິ ຊຶ່ງແມ່ນ ການຕິດຕາມ ກວດກາ ທີ່ດໍາເນີນຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ;

2. ການຕິດຕາມ ກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການຕິດຕາມ ກວດກາ ນອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການຕິດຕາມ ກວດກາ ແບບກະທັນຫັນ ຊຶ່ງແມ່ນ ການຕິດຕາມ ກວດກາ ແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ສຳລັບການດຳເນີນການຕິດຕາມກວດການັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ.

## ພາກທີ VIII
## ວັນສ້າງຕັ້ງ, ກາໝາຍ, ເຄື່ອງໝາຍ, ຊຸດນຸ່ງບັນລັງຕັດສິນ, ບັດ ຜູ້ພິພາກສາ, ຕາປະທັບ ແລະ ງົບປະມານ

### ມາດຕາ 64 ວັນສ້າງຕັ້ງສານທະຫານ

ວັນສ້າງຕັ້ງສານທະຫານ ແມ່ນ ວັນທີ 13 ກໍລະກົດ 1982. ໃນແຕ່ລະປີ ທັງສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍຮູບການທີ່ເໝາະສົມ.

### ມາດຕາ 65 (ປັບປຸງ) ກາໝາຍ, ເຄື່ອງໝາຍ, ຊຸດນຸ່ງບັນລັງຕັດສິນ ແລະ ບັດ ຜູ້ພິພາກສາ

ກາໝາຍ, ເຄື່ອງໝາຍ, ຊຸດນຸ່ງບັນລັງຕັດສິນຂອງຜູ້ພິພາກສາ ແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງໄດ້ຮັບຄຳສະເໜີຂອງປະທານສານທະຫານຂັ້ນສູງ ແລະ ຄຳເຫັນດີຂອງລັດຖະມົນຕີກະຊວງປ້ອງກັນປະເທດ.

ບັດຜູ້ພິພາກສາ ແມ່ນ ປະທານສານປະຊາຊົນສູງສຸດ ເປັນຜູ້ອອກໃຫ້.

### ມາດຕາ 66 ຕາປະທັບຂອງສານທະຫານ

ຕາປະທັບ ປະທານ, ຄະນະປະທານ, ຄະນະສານອາຍາ ແລະ ຈ່າສານ ຂອງສານທະຫານ ແຕ່ລະຂັ້ນ ກຳນົດ ດັ່ງນີ້:

1. ຕາປະທັບຂອງປະທານສານທະຫານ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ຂອບເທິງວົງມົນຂຽນຊື່ ສານທະຫານຂັ້ນຂອງຕົນ, ເບື້ອງລຸ່ມຂຽນວ່າ ປະທານ ຊຶ່ງຂັ້ນດ້ວຍດາວຫ້າແຈ;

2. ຕາປະທັບຂອງຄະນະປະທານສານທະຫານ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ຂອບເທິງວົງມົນຂຽນຊື່ ສານທະຫານຂັ້ນສູງ, ເບື້ອງລຸ່ມຂຽນວ່າ ຄະນະປະທານ ຊຶ່ງຂັ້ນດ້ວຍດາວຫ້າແຈ;

3. ຕາປະທັບຂອງຄະນະສານອາຍາ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ຂອບເທິງວົງມົນຂຽນຊື່ ສານທະຫານຂັ້ນຂອງຕົນ, ເບື້ອງລຸ່ມຂຽນວ່າ ຄະນະສານອາຍາ ຊຶ່ງຂັ້ນດ້ວຍດາວຫ້າແຈ;

4. ຕາປະທັບຂອງຈ່າສານ ເປັນຮູບວົງມົນ ຢູ່ກາງວົງມົນຂຽນວ່າ ຈ່າສານ ເນື້ອໃນຢູ່ຂອບເທິງວົງມົນຂຽນຊື່ ສານທະຫານຂັ້ນຂອງຕົນ, ເບື້ອງລຸ່ມຂຽນວ່າ ຄະນະສານອາຍາ ຊຶ່ງຂັ້ນດ້ວຍດາວຫ້າແຈ.

ສຳລັບຕາປະທັບຂອງກົງຈັກບໍລິຫານຂອງສານທະຫານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 67 (ປັບປຸງ) ງົບປະມານຂອງສານທະຫານ

ງົບປະມານຂອງສານທະຫານ ຂຶ້ນກັບກະຊວງປ້ອງກັນປະເທດ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 68 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ພະນັກງານສານທະຫານ ທີ່ໄດ້ປະຕິບັດກົດໝາຍສະບັບນີ້ຢ່າງເຂັ້ມງວດ ເຮັດໃຫ້ການຕັດສີນ ແລະ ພິພາກສາຄະດີ ມີຄວາມຖືກຕ້ອງ, ຍຸຕິທຳ ແລະ ຕັ້ງໜ້າພັດທະນາລະບົບການຈັດຕັ້ງ ຂອງສານທະຫານ ໃຫ້ມີປະສິດທິພາບ, ໂປ່ງໃສ ແລະ ທັນສະໄໝ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ສຳລັບຜູ້ເຂົ້າຮ່ວມໃນການດຳເນີນຄະດີ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ທີ່ມີຄວາມຈິງໃຈ, ໃຫ້ຄວາມຮ່ວມມືຕໍ່ການດຳເນີນຄະດີ ກໍຈະໄດ້ຮັບນະໂຍບາຍ ຕາມລະບຽບການ.

**ມາດຕາ 69 ມາດຕະການຕໍ່ຜູ້ລະເມີດ**

ພະນັກງານສານທະຫານ, ຜູ້ເຂົ້າຮ່ວມໃນການດຳເນີນຄະດີ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ກອງທັບ, ສັງຄົມ, ກຽດສັກສີ, ຊື່ສຽງ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງ ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາຕາມກົດໝາຍ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 70 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສານປະຊາຊົນສູງສຸດ ແລະ ສານທະຫານຂັ້ນສູງ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 71 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ ວັນທີ 12 ຕຸລາ 2023 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍສານທະຫານ ສະບັບເລກທີ 38 /ສພຊ, ລົງວັນທີ 17 ທັນວາ 2013.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ